**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດທີ 2 ກໍຣະກະດາ 2023 (07-02-2023)**

---

**ບາຣະນາບາແລະໂປໂລ**

*ໂດຍປົກກະຕິແລ້ວທ່ານສຳລວດເບິ່ງການຈະເຣີນເຕີບໂຕໃນດ້ານໃດຂອງຊີວິດ?*

**ຈຸດສຳຄັນໃນບົດຮຽນ:** ຄວາມຄາດຫັວງວ່າການປຶກສາທີ່ມີສາຍສຳພັນທີ່ດີຈະສາມາດປ່ຽນແປງໄປຕາມການເວລາ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

"ໂອຍເນາະ, ຈັ່ງແມ່ນນາງໃຫຍ່ຂຶ້ນໄວແທ້ນໍ ຈາກຄັ້ງສຸດທ້າຍທີ່ຂ້າພະເຈົ້າໄດ້ເຫັນນາງ." ທ່ານໄດ້ເວົ້າແບບນີ້ຈັກເທື່ອແລ້ວຕໍ່ການທີ່ໄດ້ເຫັນລູກຂອງໃຜຜູ້ນຶ່ງ? ພວກເຮົາຄາດຫວັງວ່າເດັກນ້ອຍຕ້ອງເຕີບໃຫ່ຍຂຶ້ນ. ພວກເຮົາມີຄວາມຮູ້ສຶກຕື່ນເຕັ້ນເມື່ອເຮົາເຫັນແອນ້ອຍເລີ້ມຍ່າງກ້າວທຳອິດ, ຄຳເວົ້າທຳອິດ, ແລະແມ້ກະທັ້ງຕໍ່ຈາກນັ້ນມາ, ແລ້ວກໍໄປໂຮງຮຽນ. ມັນເປັນພາກສ່ວນທັມມະຊາດອັນນຶ່ງຂອງຊີວິດ.

ໃນຫ້ອງຮຽນວິທະຍາໄລຂອງຂ້າພະເຈົ້າຫ້ອງນຶ່ງ, ພວກເຮົາໄດ້ເດີນທາງໄປຢ້ຽມຢາມໂຮງຮຽນຂອງລັດເພື່ອການທັສນະສຶກສາສັງເກດເບິ່ງການພັດທະນາຄວາມກ້າວໜ້າຂອງເດັກທີ່ມີຄວາມທ້າທາຍ. ພວກເຮົາໄດ້ເຫັນເດັກນ້ອຍທີ່ມີອາຍຸສິບເອັດປີຍັງໃຊ້ຜ້າອ້ອມແລະຍັງນອນຢູ່ໃນຕຽງນອນແອນ້ອຍຢູ່. ເດັກນ້ອຍເຫຼົ່ານີ້ເປັນເດັກນ້ອຍທີ່ມີຫຼາກຫຼາຍເຫດຜົນທີ່ບໍ່ສາມາດຈະເຣີນເຕີບໂຕໄດ້.

ເຖິງແມ່ນວ່າພວກເຮົາມີຄວາມຄາດຫັວງໃຫ້ແອນ້ອຍແລະເດັກນ້ອຍເຫຼົ່ານັ້ນຈະເຣີນເຕີບໂຕເປັນຜູ້ໃຫ່ຍ, ຄວາມຈິງອັນດຽວກັນນີ້ຄວນຈະເປັນກັບພວກຄົນທີ່ພວກເຮົາໃຫ້ຄຳແນະນຳ. ພວກເຮົາຕ້ອງການໃຫ້ພວກເຂົາເຕີບໂຕ. ຂນະສິ່ງນັ້ນປາກົດຂຶ້ນ, ສາຍສັມພັນລະຫວ່າງຜູ້ໃຫ້ຄຳປຶກສາແລະຜູ້ຮັບຟັງການໃຫ້ຄຳປຶກສາຈະປ່ຽນແປງເຊັ່ນດຽວກັນ. ອັນນີ້ມັນເປັນພາກສ່ວນນຶ່ງທີ່ເປັນທັມມະຊາດຂອງວິນັຍໃນສາຍສັມພັນ. ດ້ວຍການປ່ຽນແປງນັ້ນມັນອາດຈະມາເຖິງຈຸດສຸດທ້າຍສາຍສັມພັນທີ່ຈະໃຫ້ຄຳແນະນຳແລະການຊອກຫາຄົນອື່ນເພື່ອຊ່ວຍເຂົາໃຫ້ເຕີບໂຕທາງຝ່າຍຈິດວິນຍານ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**<u>ສຶກສາພຣະຄັມພີ</u>**

**1. ກິຈການ 9:26-28**

*26. ເມື່ອໂຊໂລມາຮອດກຸງເຢຣູຊາເລັມແລ້ວກໍພະຍາຍາມຈະເຂົ້າສນິດສນົມກັບພວກລູກສິດແຕ່ພວກເຫຼົ່ານັ້ນຍັງຢ້ານທ່ານຢູ່ເພາະບໍ່*
*ເຊື່ອວ່າທ່ານເປັນລູກສິດ. 27. ແຕ່ບາຣະນາບາໄດ້ພາທ່ານໄປຫາພວກອັຄສາວົກແລະເລົ່າເຣື່ອງໃຫ້ເຂົາຟັງວ່າໂຊໂລໄດ້ເຫັນອົງພຣະ*
*ຜູ້ເປັນເຈົ້າໃນກາງທາງນັ້ນຢ່າງໃດ, ແລະພຣະອົງໄດ້ຊົງກ່າວກັບທ່ານ, ແລະ ທ່ານໄດ້ປະກາດອອກພຣະນາມພຣະເຢຊູໃນເມືອງດາ*
*ມາເຊດ້ວຍໃຈກ້າ. 28. ໂຊໂລໄດ້ເຂົ້ານອກອອກໃນຢູ່ກັບເຂົາໃນ ກຸງເຢຣູຊາເລັມປະກາດອອກພຣະນາມຂອງອົງພຣະຜູ້ເປັນເຈົ້າດ້ວຍ*
*ໃຈກ້າຫານ.*

ກິຈການ 9:1-25 ໄດ້ບັນທຶກເຣື່ອງການລົບຕັ້ງໃຈໃໝ່ຂອງໂຊໂລ, ຜູ້ທີ່ຮູ້ກັນດີໃນເວລາຕໍ່ມາໃນນາມຊື່ໂປໂລ. ເມື່ອມາເຖິງຂໍ້ທີ່ 26, ໂປໂລໄດ້ເປັນຜູ້ທີ່ເຊື່ອເປັນເວລາສາມປີແລະອາດຈະບໍ່ຖືວ່າເປັນຜູ້ເຊື່ອໃໝ່. ທ່ານໄດ້ສຶກສາກົດບັນຍັດໃນພຣະຄັມພີພາກພັນທະສັນຍາເດີມພາຍໃຕ້ຄູສອນໃນສມັຍຂອງທ່ານ, ຄາມາລີເອນ. ນອກຈາກນີ້, ກ່ອນທີ່ຈະມາເຢຣູຊາເລັມ. ໂຊໂລໄດ້ໄປ "ໂຮງຮຽນພຣະທັມຄັມພີ" ໃນຖິ່ນແຫ້ງແລ້ງກັນດານຂອງອາຣາເບັຽ. ມັນແມ່ນສາມປີກ່ອນທີ່ໂປໂລໄດ້ກັບໄປຍັງກຸງເຢຣູຊາເລັມ (ຄາລາເຕັຽ 1:17-18). ຄຣິສະຕຽນໃນເມືອງເຢຣູຊາເລັມໄດ້ເບິ່ງໂປໂລດ້ວຍຄວາມສົງສັຍ. ໃນເບື້ອງຕົ້ນຜູ້ທີ່ເຊື່ອເຫຼົ່ານັ້ນໄດ້ຫຼີກລ້ຽງທ່ານໃນຂນະທີ່ທ່ານສແວງ

ຫາການຮ່ວມມືກັບຜູ້ເຊື່ອຄົນອື່ນ, ແຕ່ເຂົາເຫັນວ່າມັນບໍ່ເປັນໜ້າຈະເຊື່ອວ່າຕອນນີ້ທ່ານໄດ້ກາຍມາເປັນຜູ້ຕິດຕາມພຣະຄຣິດ. ຄວາມເຊື່ອທີ່ຄົ້ນພົບໃໝ່ຂອງທ່ານອາດເປັນພຽງການຫຼອກລວງທີ່ຈະສືບຕໍ່ວຽກງານຂອງທ່ານໃນການສ້າງຄວາມເດືອດຮ້ອນໃຫ້ກັບຄຣິສຕະຈັກຫຼືບໍ? ຄຳຖາມດັ່ງກ່າວໄດ້ສ້າງອຸປະສັກອັນໃຫຍ່ຫຼວງລະຫວ່າງໂປໂລກັບຄຣິສະຕຽນຄົນອື່ນໆໃນເມືອງເຢຣູຊາເລັມ. ຢ່າງຂອບພຣະຄຸນ, ໂປໂລໄດ້ມີຜູ້ແນະນຳທີ່ຈະມາເປັນເພື່ອນຄຽງຂ້າງທ່ານແລະຊ່ວຍທ່ານພັດທະນາການຊົງຖືກເອີ້ນໃຫ້ທ່ານເປັນອັຄສາວົກຂອງພຣະຄຣິດ.

ຜູ້ໜູນນ້ຳໃຈຄົນນັ້ນເປັນສາວົກຊື່ບາຣະນາບາ, ເປັນຜູ້ທີ່ໄດ້ເລີ່ມຕົ້ນການ "ໃຫ້ການສນັບສນູນ" ໂປໂລແລະໃຫ້ຄຳໝັ້ນສັນຍາຕໍ່ທ່ານຕໍ່ໜ້າບັນດາຜູ້ທີ່ເຊື່ອຄົນອື່ນ. ແນ່ນອນການໃຫ້ການສນັບສນູນນີ້ມີລັກສະນະສະເພາະສຳລັບບາຣະນາບາ. ການອ້າງອີງເຖິງບາຣະນາບາຄັ້ງທຳອິດແມ່ນຢູ່ໃນພຣະທັມກິຈການ 4:36-37, ທີ່ເປັນຂໍ້ເນັ້ນໜັກໃຫ້ເຫັນນ້ຳໃຈເອື້ອເຟື້ອເພື່ອແຜ່ຂອງບາຣະນາບາ, ຊື່ບາຣະນາບາຍັງມີອີກຊື່ນຶ່ງວ່າໂຢເຊບ, ເຊິ່ງມີຊື່ຫຼິ້ນວ່າ "ບາຣະນາບາ" ຊຶ່ງມີຄວາມໝາຍວ່າ "ຜູ້ທີ່ມີນ້ຳໃຈເອື້ອເຟື້ອເພື່ອແຜ່" ອັນນີ້ແນ່ນອນແມ່ນເປັນຄວາມຈິງທີ່ລາວໄດ້ໃຫ້ການຊ່ວຍເຫຼືອກັບໂປໂລ, ຜູ້ທີ່ມີຄວາມທໍ້ຖອຍໃຈຍ້ອນທ່ານບໍ່ໄດ້ຮັບການຕ້ອນຮັບຈາກບັນດາເຖົ້າແກ່ຜູ້ໃຫຍ່ໃນຄຣິສຕະຈັກໃນກຸງເຢຣູຊາເລັມ. ຜູ້ທີ່ເຊື່ອໃໝ່ທຸກໆຄົນມີຄວາມສ່ຽງຫຼາຍຕໍ່ຄວາມທໍ້ຖອຍໃນເວລາທຳອິດຍ້ອນວ່າພວກເຂົາພະຍາຍາມທີ່ຈະຕິດຕາມພຣະຄຣິດ. ມີຫຼັງເກີດຂຶ້ນໃນຄວາມຊົມຊື່ນຍິນດີໃນຂນະທີ່ເດີນໄປກັບພຣະເຈົ້າ. ພວກທີ່ເຊື່ອໃໝ່ເຫຼົ່ານີ້ຕ້ອງການຄົນທີ່ຊື່ "ບາຣະນາບາ" ເພື່ອມາເດີນຄຽງຂ້າງໄປກັບພວກເຂົາ. ເຂົາຕ້ອງການໃຜຜູ້ນຶ່ງທີ່ຈະເປັນເພື່ອນເດີນໄປກັບເຂົາເພື່ອພົ້ນຜ່ານເສັ້ນທາງໃນລະຍະເລີ່ມຕົ້ນຂອງພວກເຂົາ. ເມື່ອພວກເຮົາໄດ້ທຳໜ້າທີ່ເປັນເພື່ອນໃຫ້ກຳລັງໃຈກັບຜູ້ຕິດຕາມພຣະຄຣິດຜູ້ທີ່ເຊື່ອໃໝ່ໃນພຣະຄຣິດ, ພວກເຮົາສາມາດນຳເອົາສິ່ງດັ່ງຕໍ່ລົງໄປນີ້ໃຊ້ໃນການໃຫ້ຄຳແນະນຳກັບຜູ້ທີ່ເຊື່ອໃໝ່:

- ການພັດທະນາຈັດຫາເວລາທີ່ງຽບສງົບໃນການອ່ານພຣະຄັມພີແລະອະທິຖານເປັນປະຈຳ.
- ຄວາມຈຳເປັນໃນການສາລະພາບຄວາມຜິດບາບແຕ່ລະວັນແລະຍອມຈຳນົນຕໍ່ຄວາມເປັນພຣະເຈົ້າຂອງພຣະຄຣິດ.
- ຮ່ວມຊຸມນຸມກັບຄົນອື່ນໆຢ່າງປົກກະຕິໃນກຸ່ມນ້ອຍສຶກສາພຣະຄັມພີ.
- ຂັ້ນຕອນຕ່າງໆຂອງການປະເຊີນໜ້າການທົດລອງ.
- ການຊອກຫາບ່ອນຮັບໃຊ້ໃນຄຣິສຕະຈັກຄອບຄົວ.
- ໃຫ້ຄວາມສຳຄັນກັບການນະມັສການຮວມໝູ່ເປັນປະຈຳ.
- ຊອກຫາໂອກາດທີ່ຈະແບ່ງປັນຂ່າວປະເສີດ.

ສິ່ງເຫຼົ່ານີ້ແມ່ນພຽງແຕ່ສອງສາມຢ່າງທີ່ຈະຊ່ວຍໃຫ້ຜູ້ເຊື່ອໃໝ່ເຂົ້າໃຈແລະຈະເຕີບໂຕຂຶ້ນໃນຄວາມເຊື່ອຂອງພວກເຂົາ.

## 2. ກິຈການ 11:22-26.

*22. ຂ່າວນັ້ນກໍໄດ້ເລົ່າລືໄປເຖິງຫູຄຣິສຕະຈັກໃນກຸງເຢຣູຊາເລັມເຂົາຈຶ່ງໃຊ້ບາຣະນາບາໄປຍັງເມືອງອັນຕີໂອເຊັຽ. 23. ເມື່ອທ່ານໄດ້ມາເຖິງແລ້ວກໍໄດ້ເຫັນພຣະຄຸນທີ່ພຣະເຈົ້າຊົງໂຜດກໍປິຕິຍິນດີໄດ້ຕັກເຕືອນຄົນເຫລົ່ານັ້ນໃຫ້ຕັ້ງໃຈໝັ້ນ ຕິດສນິດຢູ່ກັບອົງພຣະຜູ້ເປັນເຈົ້າ. 24. ເພາະທ່ານຜູ້ນີ້ເປັນຄົນດີເຕັມໄປດ້ວຍພຣະວິນຍານບໍຣິສຸດແລະຄວາມເຊື່ອ ແລະມີຄົນຈຳນວນຫລາຍສົມຄວນໄດ້ເພີ່ມເຕີມເຂົ້າມາຢູ່ຝ່າຍອົງພຣະຜູ້ເປັນເຈົ້າ. 25. ຝ່າຍບາຣະນາບາຈຶ່ງໄປເມືອງ ຕາໂຊເພື່ອຊອກຫາໂຊໂລ. 26. ເມື່ອພົບແລ້ວກໍພາມາຍັງເມືອງອັນຕີໂອເຊັຽທ່ານທັງສອງໄດ້ເຄີຍປະຊຸມກັນກັບຄຣິສຕະຈັກຕລອດປີນຶ່ງຈຶ່ງໄດ້ສັ່ງສອນຫລາຍຄົນສົມຄວນໃນເມືອງອັນຕີໂອເຊັຽນີ້ ພວກລູກສິດໄດ້ຖືກເອີ້ນວ່າຄຣິສະຕຽນເປັນເທື່ອທຳອິດ.*

ການຂົ່ມເຫັງທີ່ໄດ້ເກີດກັບຄຣິສຕະຈັກໃນເມືອງເຢຣູຊາເລັມໄດ້ເຮັດໃຫ້ຜູ້ທີ່ເຊື່ອໄດ້ແຕກກະຈັກກະຈາຍໄປຢູ່ທຸກທີ່ທຸກບອນ (ກິຈການ 8:1). ໃນຕອນຕົ້ນພວກເຂົາໄດ້ປະກາດເຣື່ອງຂອງພຣະເຢຊູຄຣິດກັບຄົນຢິວເທົ່ານັ້ນ. ເຖິງຢ່າງໃດກໍ່ຕາມ, ຕໍ່ມາບໍ່ດົນ, ຄົນຢິວພື້ນຖານໄດ້ເຂົ້າມາທຳລາຍ. ໃນຂນະທີ່ເປໂຕກຳລັງປະກາດຂ່າວເຣື່ອງພຣະເຢຊູກັບຊາວຕ່າງຊາດ(10:1-48), ຄຣິສຕະຈັກໃນເມືອງອັນຕີໂອເຊັຽຂອງຊີເຣັຽກໍກຳລັງປະກາດພຣະກິດຕິຄຸນເຣື່ອງຂອງພຣະເຢຊູໃຫ້ກັບຄົນຕ່າງຊາດໂດຍບໍ່ມີການຂັດຂວາງໃດໆ. ຄຣິສຕະຈັກທີ່ຢູ່ເຢ

ຣູຊາເລັມໄດ້ສັງເກດເຫັນວ່າເຫດການທີ່ເກີດຂຶ້ນໃນອັນຕີໂອເຊັຽໄດ້ພົບວ່າມີເຫດການຫຼາຍຢ່າງເກີດຂຶ້ນ, ແລະບາຣະນາບາກໍຖືກສົ່ງໄປເປັນຕົວແທນຂອງພວກເຂົາໄປຍັງເມືອງອັນຕີໂອເຊັຽ. ປາກົດວ່າຄຣິສຕະຈັກສມັຍເລີ້ມຕົ້ນໄດ້ຮັບຮູ້ຄວາມສາມາດຂອງບາຣານາບາວ່າເປັນຜູ້ໃຫ້ກຳລັງໃຈແລະເປັນຜູ້ໃຫ້ຄຳແນະນຳທີ່ດີແກ່ຜູ້ເຊື່ອໃໝ່. ໃນຖານະເປັນ "ຄົນດີ, ເຕັມໄປດ້ວຍພຣະວິນຍານບໍຣິສຸດແລະຄວາມເຊື່ອສັດທາ," ທ່ານອາດເປັນຜູ້ເໝາະສົມສຳລັບຄຣິສຕະຈັກທີ່ມີຜູ້ເຊື່ອໃໝ່, ທັງຊາວຢິວແລະຄົນຕ່າງຊາດ. ບາຣານາບາເປັນຊາວເກາະໄຊປຣັດ (ກຸບໂຣ) ແລະເຖິງແມ່ນວ່າທ່ານເປັນຊາວຢິວແຕ່ທ່ານສາມາດຕິດພັນກັບຄົນຕ່າງຊາດໄດ້ງ່າຍ. ເມື່ອທ່ານຢູ່ໃນເມືອງອັນຕີໂອເຊັຽ, ບາຣະນາບາໄດ້ເຂົ້າຮ່ວມສາມະຄີທັມກັບຜູ້ເຊື່ອໃໝ່, ແລະທ່ານເຕັມໄປດ້ວຍຄວາມຊົມຊື່ນຍິນດີທີ່ໄດ້ເຫັນພຣະວິນຍານບໍຣິສຸດຂອງພຣະເຈົ້າໄດ້ທຳງານໃນທີ່ນັ້ນແລະທ່ານເລີ້ມສິດສອນຜູ້ເຊື່ອໃໝ່ໃນທີ່ນັ້ນ, ໃນບາງຈຸດບາຣະນາບາຮູ້ວ່າວຽກງານນີ້ໃຫ່ຍຫຼວງຫຼາຍແລະຈະຕ້ອງໃຫ້ມີຜູ້ຊ່ວຍມາຮ່ວມວຽກງານຢູ່ຄຽງຂ້າງລາວເພື່ອຊ່ວຍໃຫ້ຜູ້ເຊື່ອເຫຼົ່ານັ້ນຍຶດໝັ້ນໃນຄວາມເຊື່ອເພີ້ມເຕີມຂຶ້ນໄປອີກ. ບາຣະນາບາໄດ້ເລືອກເອົາໂປໂລຜູ້ທີ່ລາວເຄີຍໃຫ້ຄຳແນະນຳມາກ່ອນໜ້ານີ້ຢູ່ທີ່ເມືອງເຢຣູຊາເລັມ. ໂປໂລຈະເປັນບຸກຄົນທີ່ເໝາະສົມທີ່ສຸດກັບວຽກງານນີ້.

ສ່ວນຕອນທ້າຍຂອງຂໍ້ທີ 26 ແມ່ນສຳຄັນ. ຢູ່ທີ່ເມືອງອັນຕີໂອເຊັຽທີ່ຜູ້ຕິດຕາມພຣະຄຣິດໄດ້ຖືກເອີ້ນວ່າເປັນ "ຄຣິສະຕຽນ" ເທື່ອທຳອິດ. ໃນເບື້ອງຕົ້ນ, ມັນບໍ່ແມ່ນຄຳຊົມທີ່ດີ, ແຕ່ມັນເປັນພຽງຄຳເວົ້າເຍາະເຍີ້ຍຂອງຄົນທີ່ບໍ່ເຊື່ອໃນເມືອງອັນຕີໂອເຊັຽໄດ້ເອີ້ນພວກເຂົາ. ເມື່ອເວລາຜ່ານໄປຄຳສັບດັ່ງກ່າວໄດ້ກາຍມາເປັນກຽດຊື່ສູງ, ແລະຍອມຮັບເອົາຄວາມເຂົ້າໃຈຂອງຜູ້ທີ່ເຊື່ອໃນພຣະເຢຊູຄຣິດແລະສະທ້ອນພຣະລັກສະນະຂອງພຣະອົງຜ່ານການດຳເນີນຊີວິດປະຈຳວັນຂອງພວກເຂົາ, ເຖິງແມ່ນວ່າຈະປະເຊີນກັບການຕໍ່ຕ້ານ.

*ເມື່ອໃດທີ່ທ່ານໄດ້ມີປະສົບການທີ່ມີຄວາມໝາຍໃນການຮັບໃຊ້ກັບຜູ້ເຊື່ອຄົນອື່ນໆ?*

## 3. ກິຈການ 15:36-40

*36. ຄັນລ່ວງໄປໄດ້ຫລາຍວັນແລ້ວໂປໂລຈຶ່ງເວົ້າກັບບາຣະນາບາວ່າ, "ໃຫ້ເຮົາພາກັນກັບໄປຢ້ຽມຢາມພວກພີ່ນ້ອງໃນ ທຸກເມືອງທີ່ເຮົາໄດ້ປະກາດພຣະທັມຂອງອົງພຣະຜູ້ເປັນເຈົ້າແລ້ວນັ້ນເພື່ອຮູ້ວ່າເຂົາເປັນຢ່າງໃດ." 37. ສ່ວນບາຣະນາບາມີນໍ້າໃຈຢາກເອົາໂຢຮັນຜູ້ມີຊື່ວ່າມາຣະໂກໄປນຳ. 38. ແຕ່ໂປໂລບໍ່ເຫັນຄວນທີ່ຈະເອົາໂຢຮັນໄປນຳດ້ວຍ ໂຢຮັນໄດ້ປະທ່ານທັງສອງໄວ້ທີ່ແຂວງປຳຟີເລັຽ ແລະບໍ່ໄດ້ໄປນຳເຂົາ. 39. ແລ້ວໄດ້ເກີດການຖົກຖຽງກັນຢ່າງແຂງແຮງຈົນແຍກຈາກກັນ ບາຣະນາບາຈຶ່ງເອົາມາຣະໂກລົງເຮືອສະເພົາເດີນທາງໄປຍັງເກາະກຸບໂຣ. 40. ແຕ່ໂປໂລໄດ້ເລືອກເອົາຊີລາ ແລະເມື່ອພວກພີ່ນ້ອງໄດ້ຝາກທ່ານທັງສອງໄວ້ໃນພຣະຄຸນຂອງພຣະຜູ້ເປັນເຈົ້າແລ້ວກໍໄດ້ອອກໄປ.*

ບາຣະນາບາແລະໂປໂລໄດ້ສືບຕໍ່ຄວາມສັມພັນຂອງພວກເຂົາເປັນຄຣູຮ່ວມງານໃນການປະກາດນາມຊື່ຂອງອົງພຣະເຢຊູຄຣິດຕລອດການເດີນທາງປະກາດຂ່າວປະເສີດຄັ້ງທຳອິດ. ແຕ່ໃນບັດນີ້ເຖິງເວລາທີ່ພວກເຂົາທີ່ຈະແຍກຍ້າຍກັນທຳໜ້າທີ່ວຽກງານຕ່າງໆ. ການເດີນທາງບາຣະນາບາແລະໂປໂລໃນການໄປສິດສອນຄັ້ງທຳອິດແມ່ນໂຢຮັນມາຣະໂກ, ພີ່ນ້ອງໜຸ່ມນ້ອຍຂອງບາຣະນາບາ (ຄາລາເຕັຽ 4:10). ຫຼັງຈາກທີ່ການເດີນທາງໄດ້ຜ່ານເກາະກຸບໂຣໄປແລ້ວ, ພວກເຂົາເຈົ້າໄດ້ມຸ້ງໜ້າໄປສູ່ຝັ່ງທະເລຂອງຕູລະກີຍຸກ-ໃໝ່. ຢູ່ທີ່ນີ້ ໂຢຮັນ ມາຣະໂກ ໄດ້ປະສອງຄົນທີ່ເດີນທາງໄປຮ່ວມກັບລາວແລະກັບຄືນໄປເຢຣູຊາເລັມ. ເປັນຫັຽງລາວຈຶ່ງປະຄວາມພະຍາຍາມໃນການທຳພັນທະກິດຊຶ່ງມັນປະໄວ້ແຕ່ການຄາດຄະເນ. ສິ່ງທີ່ພວກເຮົາສາມາດເຂົ້າໃຈໄດ້ແມ່ນ "ການປະຖິ້ມ" ເຮັດໃຫ້ໂປໂລຂັດເຄືອງໃຈ. ນີ້ແມ່ນເປັນເຣື່ອງທີ່ຈະແຈ້ງເມື່ອລາວແລະບາຣະນາບາເລີ້ມວາງແຜນທີ່ຈະກັບຄືນໄປຄຣິສຕະຈັກບ່ອນທີ່ພວກເຂົາກໍ່ຕັ້ງຂຶ້ນເພື່ອໃຫ້ການໜູນໃຈເຂົາໃນການດຳເນີນຊີວິດຄຣິສະຕຽນຕໍ່ໄປ.

*ແມ່ນຫັຍງຄືຜົນປໂຍດແລະການທ້າທາຍຂອງການແຍກທາງຂອງຄຣິສະຕຽນ?*

ໂປໂລແລະບາຣະນາບາບໍ່ໄດ້ຕົກລົງກັນວ່າ ໂຢຮັນມາຣະໂກຄວນຈະໄດ້ຮັບອະນຸຍາດໃຫ້ໄປປະກາດພຣະທັມຂອງພຣະເຈົ້າຄັ້ງທີ່ສອງນີ້ຫຼືບໍ່. ເຖິງແມ່ນວ່າເຣື່ອງນີ້ມີຄວາມບໍ່ເຫັນພ້ອມກໍຕາມ, ພຣະເຈົ້າຍັງທຳງານຢູ່ຖ້າມກາງວຽກງານນັ້ນ. ໂປໂລເລືອກຊີລາໄປກັບລາວ

ໃນການເດີນທາງກັບຄືນໄປຫາພີ່ນ້ອງໃນຄຣິສຕະຈັກທີ່ຊີເຣັຽ. ໃນທາງກົງກັນຂ້າມ, ບາຣະນາບາ, ໄດ້ເລືອກເອົາໂຢຮັນ ມາຣະໂກ ໄປກັບລາວເພື່ອກັບໄປທີ່ເກາະກຸບໂຣ. ບາງຄັ້ງໃນຄວາມສັມພັນຂອງການໃຫ້ຄວາມແນະນຳ. ທັງສອງຝ່າຍເລືອກທີ່ຈະໃຊ້ເສັ້ນທາງທີ່ແຕກຕ່າງກັນ. ນີ້ອາດຈະເກີດມາຈາກຄວາມບໍ່ເຫັນດີກັນ; ອາດເປັນເວລາທີ່ບໍ່ໄດ້ຕັ້ງໃຈ. ແຕ່ຈົ່ງຮູ້ເຖີງຄວາມເປັນໄປໄດ້ແລະກຽມພ້ອມທີ່ຈະແບ່ງແຍກດ້ວຍໄມຕີຈິດ. ບາຣະນາບາແລະໂປໂລໄດ້ຮັກສາຄວາມເຄົາຣົບເຊິ່ງກັນແລະກັນແລະສິ່ງທີ່ພຣະເຈົ້າກຳລັງເຮັດໂດຍຜ່ານພວກເຂົາ. (1 ໂກຣິນໂທ 9:6) ພວກເຮົາຄວນເຮັດເປັນແບບດຽວກັນກັບຜູ້ທີ່ເຮົາເປັນລູກສິດ, ເຖິງແມ່ນວ່າພຣະເຈົ້າໄດ້ສົ່ງພວກເຮົາໄປໃນທິດທາງທີ່ແຕກຕ່າງກັນ.

*ພວກເຮົາສາມາດຮຽນຫຍັງແດ່ຈາກສາຍສັມພັນລະຫວ່າງບາຣະນາບາແລະໂປໂລ?*

## ນຳໃຊ້ໃນຊີວິດ

ພວກເຮົາອາດຈະມີຄວາມຫັວງວ່າຄວາມສັມພັນໃນການໃຫ້ຄຳແນະນຳຈະນຳໃຫ້ເກີດການປ່ຽນແປງຕລອດເວລາ. ເລືອກເອົານຶ່ງຂໍ້ຂອງການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຄືນດີກັນ.** ການອະທິຖານຢ່າງຈິດຈໍ່ສຳຫລວດສາຍສັມພັນຂອງທ່ານຕໍ່ບາງຄົນທີ່ທ່ານຮູ້ວ່າແມ່ນຜູ້ທີ່ບໍ່ເຫັນພ້ອມກັບທ່ານ. ອະທິຖານຂໍໃຫ້ພຣະເຈົ້າເປີດທາງໃຫ້ທ່ານໄດ້ຄືນດີກັນກັບຄົນນັ້ນ..
- **ຈົ່ງພິຈາລະນາ.** ໃຊ້ເວລາສຳຫຼວດເບິ່ງສາຍສັມພັນຂອງທ່ານກັບຄົນທີ່ທ່ານກຳລັງແນະນຳຫຼືຜູ້ກຳລັງໃຫ້ຄຳແນະນຳ, ແມ່ນຫຍັງຄືພາກສ່ວນທີ່ອາດຈະກາຍເປັນແຫຼ່ງທີ່ມາຂອງການບໍ່ລົງລອຍກັນ? ຂັ້ນຕອນໃດທີ່ຈຳເປັນຕ້ອງຫຼີກເວັ້ນຈາກການຂັດແຍ້ງ? ຈົ່ງອະທິຖານຂໍການຊົງນຳເພື່ອພິຈາລະນາເບິ່ງຂັ້ນຕອນເຫຼົ່ານັ້ນ.
- **ແບ່ງແຍກອອກ.** ເວົ້າກັບຜູ້ໃດຜູ້ນຶ່ງໃນການແນະນຳຂອງທ່ານກ່ຽວກັບຄວາມສັມພັນໃນແຜນການທີ່ຈະເພີ້ມຄວາມສັມພັນຂອງທ່ານ, ດ້ວຍແຕ່ລະຄົນຂອງພວກທ່ານໃນການເລືອກຄົນນຶ່ງອີກມາເປັນຜູ້ໃຫ້ຄຳແນະນຳ. ໃນການເຮັດແນວນີ້, ສອງຈະການມາເປັນສີ່ແລະທ່ານຈະເພີ້ມຜົນສຳເຣັດຂອງທ່ານສຳລັບພຣະຄຣິດ.

ຄຣິສະຕຽນເຮົາຫຼາຍຄົນບໍ່ເຄີຍເຕີບໂຕຂຶ້ນ, ແລະຄວາມສັມພັນຂອງພວກເຂົາກັບຄົນອື່ນກໍບໍ່ເຕີບໂຕ. ການບໍ່ເກີດຜົນອັນນີ້ບໍ່ພຽງແຕ່ວຽກງານທີ່ພຣະເຈົ້າຕ້ອງການເຮັດຢູ່ໃນພວກເຮົາແຕ່ວຽກງານທີ່ພຣະອົງຕ້ອງປະສົງເຮັດຜ່ານພວກເຮົາ. ການຈະເລີນເຕີບໂຕໃນການເດີນໄປນຳກັນກັບພຣະຄຣິດຂອງພວກເຮົາແລະໃນສາຍການພົວພັນທີ່ໃຫ້ຄຳແນະນຳຂອງພວກເຮົາ, ຈະນຳເອົາຜົນດີມາສູ່ພວກເຮົາແລະນຳພຣະກຽດຕໍ່ພຣະເຈົ້າ.

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**